9 

ໃນເຂດນີ້ມີຄົນລ້ຽງແກະທີ່ທົ່ງນາ. ມີທູດຂອງພຣະເຈົ້າມາປະກົດແກ່ພວກເຂົາ. ພວກເຂົາພາກັນຢ້ານຫລາຍ ແຕ່ທູດສະຫວັນໄດ້ກ່າວກັບເຂົາວ່າ, “ຢ່າສູ່ຢ້ານເລີຍ! ເຮົານໍາຂ່າວດີມາໃຫ້ພວກເຈົ້າຮູ້ຄືຢູ່ໃນເມືອງພຣະຜູ້ໄຖ່ຂອງພວກເຈົ້າໄດ້ເກີດມາເປັນພຣະຜູ້ຊ່ວຍ. ພວກເຈົ້າຈະພົບເດັກເກີດໃໝ່ຕູ້ມຜ້າອ້ອມນອນຢູ່ໃນຮາງຫຍ້າ.

ໃນທັນໃດນັ້ນກໍມີກອງທັບແຫ່ງສະຫວັນໝູ່ໃຫຍ່ມາປະກົດຮ້ອງສັນລະເສີນພຣະເຈົ້າ.

10 

ແລ້ວພວກລ້ຽງແກະພາກັນໄປຍັງເມືອງເບັດເລເຮັມແລ້ວພົບ ນາງມາລີ ກັບ ທ້າວໂຢເຊັບ ແລະ ເດັກເກີດໃໝ່ນອນຢູ່ໃນຮາງຫຍ້າ.

11 

ເມື່ອພວກລ້ຽງແກະພົບເດັກເກີດໃໝ່ແລ້ວເຂົາກໍເລົ່າໃຫ້ ນາງມາລີ ກັບ ທ້າວໂຢເຊັບ ຟັງຕາມທີ່ທູດສະ ຫວັນໄດ້ບອກນັ້ນ. ທຸກຄົນໄດ້ຟັງ ແລະ ຕ່າງກໍປະຫລາດໃຈ.

12 

ເມື່ອ ທ້າວໂຢເຊັບ ແລະ ນາງມາລີ ໄດ້ເຮັດວຽກສໍາເລັດແລ້ວພວກເຂົາຈຶ່ງໄດ້ກັບໄປຍັງແຂວງຄາລີເລ. ພຣະເຢຊູກໍໄດ້ຈະເລີນເຕີບໂຕຂຶ້ນຢູ່ທີ່ນັ້ນ.



## ການເກີດຂອງພຣະເຢຊູຄຣິດເຈົ້າ

ລູກາ 1:26-38- ມັດທາຍ1:18-25 - ລູກາ 2:1-12 - ມັດທາຍ 2:1-12

| | |
|---|---|
| ລູກາ 1:26,27 | |
| | |
| | |
| ລູກາ 1:28 | |
| | |
| ລູກາ 1:29 | |
| | |
| ລູກາ 1:30-33 | |
| | |
| | |
| | |
| | |
| ລູກາ 1:34 | |
| | |
| ລູກາ 1:35-37 | |
| | |
| | |
| | |
| | |
| | |
| ລູກາ 1:38 | |
| | |

## ການເກີດຂອງພຣະເຢຊູຄຣິດເຈົ້າ

ລຸກາ 1:26-38- ມັດທາຍ1:18-25 - ລຸກາ 2:1-12 - ມັດທາຍ 2:1-12

| | |
|---|---|
| ມັດທາຍ1:18 | |
| | |
| ມັດທາຍ1:19 | |
| | |
| | |
| ມັດທາຍ1:20,2 | |
| | |
| | |
| | |
| | |
| ມັດທາຍ1:22,2 | |
| | |
| | |
| ມັດທາຍ1:24,2 | |
| | |
| | |
| | |
| ລູກາ 2:1-3 | |
| | |
| | |
| | |
| | |



5 

ແຕ່ໃນຂະນະທີ່ຄິດເຖິງແຜນການນີ້ຢູ່ມີທູດຂອງພຣະເຈົ້າປະກົດໃນຄວາມຝັນແລະກ່າວວ່າ, "ໂຢເຊັບເອີຍ! ຢ່າສູ່ຢ້ານທີ່ຈະຮັບເອົາ ນາງມາລີ ເປັນເມຍ. ການທີ່ ນາງມາລີ ຕັ້ງທ້ອງນັ້ນກໍໂດຍລິດເດດຂອງພຣະວິນຍານ ບໍລິສຸດ. ນາງຈະເກີດລູກຊາຍຜູ້ໜຶ່ງ ແລະ ເຈົ້າຈະໃສ່ຊື່ເດັກນີ້ວ່າ ເຢຊູ."

6 

ທ້າວໂຢເຊັບ ຈຶ່ງປະຕິບັດຕາມທີ່ພຣະເຈົ້າໄດ້ສັ່ງແຕ່ ທ້າວໂຢເຊັບ ບໍ່ໄດສົມສູ່ກັບນາງ ຈົນກວ່າໄດ້ເກີດລູກຊາຍແລ້ວ.

7 

ໃນເວລານັ້ນຈັກກະພັດໂລມໄດ້ອອກຄຳສັ່ງໃຫ້ປະຊາຊົນໄປຈົດທະບຽນຄອບຄົວ. ຝ່າຍ ທ້າວໂຢເຊັບ ກໍອອກເດີນທາງຈາກເມືອງນາຊາເຫລັດ ໃນແຂວງຄາລີເລ ໄປຍັງເມືອງເບັດເລເຮັມ ໃນແຂວງຢູດາຍ ທີ່ເປັນບ້ານເກີດເມືອງນອນຂອງ ທ້າວໂຢເຊັບ.

8 

ສ່ວນ ນາງມາລີ ນັ້ນກຳລັງຖືພາ ແລະ ໃນຂະນະທີ່ພວກເຂົາຍັງຢູ່ທີ່ ເມືອງເບັດເລເຮັມນັ້ນ ນາງມາລີ ເກີດລູກ. ນາງໄດ້ເອົາຜ້າອ້ອມຕູ້ມ ແລະ ປົງລູກໄວ້ໃນຮາງຫຍ້າ ເພາະວ່າບໍ່ມີຫ້ອງວ່າງສຳລັບເຂົາໃນໂຮງແຮມ. ທ້າວໂຢເຊັບ ໄດ້ເອີ້ນລູກຊາຍນັ້ນວ່າ ເຢຊູ.

## ພຣະເຢຊູເຈົ້າເກີດ

ມັດທາຍ1:18-25 & ລູກາ 1:26-2:38

ເຮົາຢາກຈະຮູ້ຈັກທ່ານຜູ້ໜຶ່ງທີ່ຈະມາຊ່ວຍເຮົາໃຫ້ພົ້ນຈາກອຳນາດຂອງຊາຕານບໍ?

ມື້ນີ້ເຮົາຈະໄດ້ຮູ້ຈັກຊື່ຂອງທ່ານຜູ້ນັ້ນ ແລະ ຈະໄດ້ຮຽນຮູ້ກ່ຽວກັບຈຸດປະສົງທີ່ທ່ານໄດ້ສະເດັດເຂົ້າມາໃນໂລກ.

1 

ໃນແຂວງຄາລີເລເມືອງນາຊາເລັດ ມີຍິງຄົນໜຶ່ງຊື່ວ່າ ນາງມາລີ. ລາວມີຄູ່ໝັ້ນຊື່ວ່າ ທ້າວໂຢເຊບ. ມື້ໜຶ່ງມີທູດສະຫວັນຂອງພຣະເຈົ້າປະກົດຕໍ່ ນາວມາລີ ແລະ ກ່າວວ່າ, “ມາລີ ເອີຍ! ເຈົ້າຈະຖືພາ ແລະ ເກີດລູກຊາຍ. ລູກຈະເອີ້ນວ່າເປັນບຸດຂອງພຣະເຈົ້າອົງສູງສຸດ.”

2 

ຝ່າຍ ນາງມາລີ ເວົ້າກັບທູດສະຫວັນວ່າ, “ຜູ້ຂ້າຍັງບໍ່ເຄີຍສົມສູ່ກັບຊາຍໃດຈັກເທື່ອ ເຫດການຈະເປັນດັ່ງທີ່ທ່ານກ່າວມາໄດ້ຢ່າງໃດ?”

3 

ທູດສະຫວັນຕອບນາງວ່າ, “ລິດເດດຂອງພຣະເຈົ້າອົງສູງສຸດຈະຄຸມເຈົ້າດ້ວຍເຫດນີ້ແຫຼະ ເດັກຜູ້ບໍລິສຸດຈະເປັນທີ່ເອີ້ນວ່າ, “ບຸດຂອງພຣະເຈົ້າ.”

4 

ແລ້ວ ນາງມາລີ ກໍໄດ້ຖືພາດ້ວຍລິດເດດແຫ່ງພຣະວິນຍານບໍລິສຸດ. ຝ່າຍ ທ້າວໂຢເຊັບ ຄູ່ໝັ້ນຂອງນາງມາລີ ຕັດສິນໃຈວ່າຈະຖອນໝັ້ນເສຍຢ່າງລັບໆ



| ການເກີດຂອງພຣະເຢຊູຄຣິດເຈົ້າ<br>ລຸກາ 1:26-38- ມັດທາຍ1:18-25 - ລຸກາ 2:1-12 - ມັດທາຍ 2:1-12 | |
|---|---|
| ລຸກາ 2:4,5 | |
| | |
| | |
| ລຸກາ 2:6,7 | |
| | |
| | |
| ລຸກາ 2:8 | |
| | |
| ລຸກາ 2:9-12 | |
| | |
| | |
| | |
| | |
| | |
| ລຸກາ 2:13,14 | |
| | |
| | |
| ລຸກາ 2:15,16 | |
| | |
| | |
| ລຸກາ 2:17,18 | |
| | |

## ການເກີດຂອງພຣະເຢຊູຄຣິດເຈົ້າ

ລູກາ 1:26-38- ມັດທາຍ1:18-25 - ລູກາ 2:1-12 - ມັດທາຍ 2:1-12

| | |
|---|---|
| ລູກາ 2:19 | |
| | |
| ລູກາ 2:20 | |
| | |
| | |
| ມັດທາຍ 2:1,2 | |
| | |
| | |
| | |
| ມັດທາຍ 2:3,4 | |
| | |
| | |
| | |
| ມັດທາຍ 2:5,6 | |
| | |
| | |
| ມັດທາຍ 2:7,8 | |
| | |
| | |
| | |
| | |
| | |



## ການເກີດຂອງພຣະເຢຊູຄຣິດເຈົ້າ

ລູກາ 1:26-38- ມັດທາຍ1:18-25 - ລູກາ 2:1-12 - ມັດທາຍ 2:1-12

| | |
|---|---|
| ມັດທາຍ 2:9,10 | |
| | |
| | |
| | |
| ມັດທາຍ 2:11 | |
| | |
| | |
| | |
| ມັດທາຍ 2:12 | |
| | |
| | |
| | |
| | |
| | |
| | |
| | |
| | |
| | |
| | |
| | |
| | |
| | |